# ຂອງດີໃນໜັງສືໃບລານກັບ (ສຳລັບ) ຄົນຮຸ່ນໃໝ່ 14

ດວງເດືອນ ບຸນຍາວົງ

## ເນື້ອຄວາມຫຍໍ້

ບົດຄວາມນີ້ ຈະຊີ້ໃຫ້ເຫັນວ່າ ໜັງສືໃບລານ ແລະເອກະສານບູຮານຂອງລາວ ມີບົດເລື່ອງທີ່ຈັດເປັນວັນນະຄະດີ ທັງທາງໂລກ ແລະ ທາງທັມ ມີຄຸນຄ່າໃນແງ່ສິລະປະບັນເທີງ ວັດທະນະທັມ ຄວາມຮູ້ຮອບຕົວ ແຕ່ດ້ວຍເຫດການທັງພາວະວິໄສ ປັດໄຈທັງພາຍນອກພາຍໃນ ເຮັດໃຫ້ບົດເລື່ອງເກົ່າແກ່ບູຮານສ່ວນໃຫຍ່ ຫລຸດຜ່ອນຄວາມສຳຄັນລົງ ການນຳມາຮັບໃຊ້ໃນການສຶກສາ ແລະບັນເທີງ ບໍ່ໄດ້ຮັບຄວາມສົນໃຈເປັນທີ່ນິຍົມຊົມຊອບເທົ່າທີ່ຄວນ. ບົດຄວາມນີ້ ຍັງຈະໄດ້ສະເໜີບາງຂໍ້ສັນນິຖານ ກ່ຽວກັບການໃຊ້ຈ່າຍຂອງປະຊາຊົນກຸ່ມນຶ່ງເພື່ອຊື້ສື່ບັນເທີງ ຜະລິດໂດຍຕ່າງປະເທດ ຊຶ່ງຈຳນວນນຶ່ງກໍອີງໃສ່ວັນນະຄະດີເກົ່າແກ່ ແລະ ໃນຂໍ້ສຸດທ້າຍ ຈະໄດ້ສະເໜີບາງວິທີການ ເພື່ອນຳໃຊ້ເລື່ອງທີ່ໃຫ້ຄະຕິ ເໝາະກັບຄົນຮຸ່ນໃໝ່ໄວໜຸ່ມ

## ໂຄງຮ່າງບົດ

I. ຄວາມອຸດົມສົມບູນແຫ່ງຄັງສາງວັນນະຄະດີບູຮານລາວໂດຍທົ່ວໄປ
II. ຄວາມບໍ່ຕໍ່ເນື່ອງ ໃນການຖ່າຍທອດໃນລະຍະລາວເສຽເອກະລາດ
III. ສະພາບ ວິທີການຖ່າຍທອດໃນອະດີດ ແລະ ປັດຈຸບັນ (ປຽບທຽບ ທ່າດີ ແລະ ທ່າອ່ອນ)
IV. ການເຜີຍແຜ່ ແລະ ວິທີການຖ່າຍທອດ
V. ສະຫລູບ ແລະ ຂໍ້ສະເໜີ ໃຜຈະເຮັດຫຍັງໃນອະນາຄົດ? ຢູ່ໃສ ? ເວລາໃດ?

## I. ຄວາມອຸດົມສົມບູນ ແຫ່ງຄັງສາງວັນນະຄະດີບູຮານລາວ

### ກ. ສະພາບທົ່ວໄປ

ວັນນະຄະດີບູຮານຂອງເຮົາ ອາດຈັດແບ່ງເປັນ 2 ປະເພດໃຫຍ່ ຄື :

1. ປະເພດປາກເປົ່າ ເລົ່າຕໍ່ກັນມາ ເຊິ່ງອາດຈະເກີດພ້ອມໆກັບທີ່ຄົນລາວໃຊ້ພາສາປາກເວົ້າຕິດຕໍ່ກັນ (ປະເພດຄຳຜະຫຍາພາສິດ ຄຳພັງເພີຍຕ່າງໆ ... )
2. ປະເພດຂຽນບັນທຶກເປັນລາຍລັກອັກສອນ ເຊິ່ງກໍຄົງຈະໄດ້ຮັບການພັດທະນາຮຸ່ງເຮືອງມາແລ້ວເກືອບສອງພັນປີ (ພາຍຫລັງການປະດິດອັກສອນລາວອອກໃຊ້ ໃນລະຫວ່າງ ພ.ສ. 600 ປາຍ ຫລື ຄ.ສ. 57, ປຫວັດໜັງສືລາວ, ຫນ້າ 21-22, ສິລາ ວີຣະວົງສ໌, ພິມຄັ້ງທີ 2 ໂດຍຫໍສະໝຸດແຫ່ງຊາດ 1995)

ສຳລັບປະຊາຊາດນຶ່ງ ຊຶ່ງມີພົນລະເມືອງຫ້າລ້ານກວ່າຄົນ ແລະ ເຄີຍເສຽເອກະລາດຢູ່ພາຍໃຕ້ການປົກຄອງຂອງຊາດຕ່າງດ້າວຕິດຕໍ່ກັນກວ່າ 200 ປີ[1] ຜ່ານແປວໄຟສົງຄາມທຳລາຍລ້າງ[2] ແລະ ຕົກເປັນປະເທດເປົ້າໝາຍຍຸທະສາດ ຂອງສອງຄ້າຍການເມືອງມາກວ່າ 30 ປີ (1940-1973) ແລ້ວ ການຄົງຕົວຢູ່ ແລະການມີຕົວຕົນຂອງວັນນະຄະດີ ທັງໃນຮູບປາກເປົ່າ ແລະ ທີ່ບັນທຶກໄວ້ໃນພັບສາ ແລະ ໃບລານທີ່ມີຢູ່ທົ່ວປະເທດເຖິງ 400,000 ກວ່າຜູກ[3] ມັນແມ່ນຍິ່ງກວ່າຄວາມເອກອ້າງທະນົງໃຈຂອງຊາດ ແລະ ປະຊາຊົນລາວທຸກທົ່ວຫນ້າ. ດ້ວຍວ່າ ອາຣະຍະທັມດ້ານການຂຽນ ການແຕ່ງໜັງສືນີ້ (ສັນທະສາດເຊິ່ງນອນຢູ່ໃນ 18 ວິຊາຕົ້ນຕໍ ທີ່ຜູ້ປົກຄອງ/ຜູ້ນຳໃນສະໄໝບູຮານ ຕ້ອງຮຽນຮູ້ (ວັນນະບຄະດີລາວເພື່ອການສຶກສາ ສິລາ ວີຣະວົງສ໌. ກົມວັນນະ

---

1 ສົງຄາມຕໍ່ສູ້ກູ້ຊາດດ້ວຍກຳລັງອາວຸດ ດຳເນີນມາແຕ່ຊຸມກາງປີ 50 ແລະ ສືບຕໍ່ມາຮອດຕົ້ນປີ 70 ຈຶ່ງຍຸຕິລົງຢ່າງສິ້ນເຊີງ

2 ໃນລະຍະສົງຄາມກູ້ຊາດ ລະຍະອຸ້ນຂ້ຽວທີ່ສຸດ ເລີ່ມປີ 1964 -1973 ມີການຖິ້ມລະເບີດທາງຍົນ ໃສ່ດິນແດນລາວ ເຖິງ 500,000 ຖ້ຽວບິນ ສະເລ່ຽຕະຫລອດເວລາ 9 ປີ ເຮືອບິນຖິ້ມລະເບີດລົງໃນລາວ ທຸກໆ 8 ນາທີ (ຄາບນ້ຳຕາ ບອມບີ: 20 ປີ ສັນຕິພາບໃນລາວ, ອຸທິນ ບຸນຍາວົງ "ວາລະສານ ສິລະປະວັດທະນະທັມ (ໄທ Art & Culture Magazine, December 1995 ISBN 0125-3654, ທັນວາ 1995). ຊຽງຂວາງເປັນແຂວງທີ່ໄດ້ຮັບຄວາມເສຽຫາຍໜັກໜ່ວງທີ່ສຸດ ຄືໄດ້ຮັບຜູ້ລະ 300,000 ໂຕນ ສະເລ່ຽຕໍ່ຫົວປະຊາຊົນ ສະໄຫມນັ້ນ ຖືກຜູ້ລະ 2 ໂຕນ (20.000 ກິໂລ)

3 ໃບຂ່າວ ໂຄງການໃບລານ ສະບັບສະຖິຕິຂອງໂຄງການ ບອກວ່າ ແຕ່ລະຫວ່າງສອງຮ້ອຍປີກ່ອນ ໃບລານຈຳນວນບໍ່ຮູ້ວ່າເທົ່າໃດໃນລ້ານຊ້າງ ຖືກເຄື່ອນຍ້າຍອອກຈາກແຜ່ນດິນແລ້ວ

ຄະດີ ກະຊວງສຶກສາ 1960) ຖືວ່າເປັນຂີດໝາຍແຫ່ງຄວາມຈະເລີນຮຸ່ງເຮືອງຢ່າງນຶ່ງ ຂອງມະນຸດຊາດ. ດັ່ງດຽວກັບໜັງສືຄຳພີດີກາ ການບັນທຶກຂໍ້ມູນຂອງບັນດາປະຊາຊາດອື່ນໃນໂລກ (ຄຳພີໄບເບີນ, ຄຳພີໂກຣານ ອາຫຣັບ, ຄຳພີ ໄຕຣເພດອິນເດຽ, ຄຳສອນຂົງຈື້ຈີນ, ນິພົນມາກເລນິນຣັດເຊຽ ແລະອື່ນໆ) ກໍໝາຍບອກ ຄວາມຈະເລີນຂອງຊົນຊາດນັ້ນໆ. ໜັງສືໃບລານລາວ ກໍເປັນຄັງແຫ່ງຄວາມຮູ້ອັນມະຫາສານ ມີປະໂຫຍດ ໃນດ້ານການສຶກສາວິຊາສັງຄົມສາດ ມະນຸດວິທະຍາ ປັດຊະຍາ ບໍ່ພຽງແຕ່ສຳລັບ ແຕ່ຄົນລາວທໍ່ນັ້ນ ແຕ່ປະຊາ ຊາດອື່ນໆ ກໍໄດ້ຮັບຜົນປະໂຫຍດນຳດ້ວຍ. ນັກວັນນະຄະດີຫລາຍຄົນ (ດຣ. ວິທຍ໌ ສີວະສຸຣິ ຍານົນທ໌, ວັນນະ ຄະດີ ແລະວັນນະຄະດີວິຈານ, ສຳນັກພິມອັກສອນຈະເຣີນທັດ, ກຸງເທບ, ປະເທດໄທ; ໜ້າ 35) ໃຫ້ຄວາມ ເຫັນວ່າ :

" ທຳອິດ ວັນນະຄະດີປາກເປົ່າ ເປັນສິ່ງທີ່ຂັບລຳ ຮ້ອງ ເລົ່າສືບຕໍ່ກັນມາ ກ່ອນຈະມີການຂຽນຂຶ້ນ, ວັນນະຄະດີເປັນສິ່ງທີ່ມີປະຈຳສັງຄົມມະນຸດມາຕັ້ງແຕ່ເດີມ ແລະ ເປັນສິ່ງທີ່ເກີດຂຶ້ນພ້ອມໆກັບທີ່ມະນຸດຮູ້ຈັກໃຊ້ ພາສາເປັນສື່ໃຫ້ຜູ້ອື່ນເຂົ້າໃຈໃນຄວາມຮູ້ສຶກ ແລະ ຄວາມຄຶດຄວາມປາດຖະໜາຂອງຕົນ "

## ຂ. ຄວາມຫລາກຫລາຍຂອງຮູບແບບການປະພັນວັນນະຄະດີຂຽນ

(ໃນບົດນີ້ຈະຂໍເວົ້າເຖິງແຕ່ວັນນະຄະດີຂຽນ)

ວັນນະຄະດີ ຂຽນໄວ້ໃນໃບລານ ພັບສາ ຫລື ສິລາຈາລຶກ ... ມີທັງແຕ່ງເປັນຄຳລາວ ອັກສອນລາວ ພາສາປາລີ ຂຽນດ້ວຍອັກສອນທັມ, ພາສາທ້ອງຖິ່ນ ເຊັ່ນ : ອັກສອນໄຕດຳ ໄຕລື້ ແລະ ອື່ນໆ.

### ຂ/1. ຮູບແບບການຂຽນ

ເປັນຮ້ອຍແກ້ວ (ຄຳຮຽງທຳມະດາ) ແລະ ກະວິນິພົນ (ກາບກອນ ໂຄງ ໂສກ ຫລືສານສະໂຫລກ, ຮ່າຍ) ໂດຍສະເພາະວັນນະຄະດີທີ່ເປັນກະວີນິພົນນີ້ ອຸດົມສົມບູນດ້ານຮູບແບບຫລາຍ. ໃນຕຳລາຊື່ "ແບບແຕ່ງກອນ ໄຫວຽງຈັນ ແລະ ກາບສານວິລາສິນີ" ທີ່ທ່ານ ມະຫາສີລາ ວີຣະວົງສ໌ ຂຽນໄວ້ແຕ່ປີ 1942 ພິມຢູ່ປະເທດໄທ ແລະຈັດພິມຄືນໂດຍສະມາຄົມສິ່ງປຶ້ມຮູບໃຫ້ເດັກນ້ອຍລາວແຫ່ງຍີ່ປຸ່ນ (A.S.P.B.) 1994 ມີຕົວຢ່າງກາບກອນ ແບບຕ່າງໆ ຢູ່ 20 ກວ່າຊະນິດ ແລະ ເມື່ອທ່ານໄດ້ປັບປຸງໃໝ່ ໃນຕຳລາທີ່ຊື່ວ່າ "ຫລັກພາສາລາວ" ຈັດພິມ ປີ 1962 ໂດຍ ຄະນະກັມມະການວັນນະຄະດີ ກະຊວງສຶກສາທິການ ທ່ານໄດ້ຈັດກຸ່ມໃໝ່ໂດຍເອີ້ນ "ປະເພດ ຂອງ ຄຳກອນລາວ", ສັງລວມຈາກທັງສອງເຫລົ້ມ ຈັດແບ່ງປະເພດກາບກອນ ຂອງລາວໄດ້ດັ່ງນີ້ :

1. ກອນກາບ ( 2 ຢ່າງ ບ່ອນສຳຜັດຕ່າງກັນ )
2. ກອນລຳ ( ມີ 2 ຢ່າງ ຄື ກອນຕັດ ແລະ ກອນເຍີ້ນ )
3. ກອນອ່ານ ມີຫລາຍຢ່າງ
   - ກອນອ່ານ ທັມມະດາ (ວະຊິຣະປັນຕິ)
   - ກອນອ່ານວິດຊຸມາລີ (ສາຍຟ້າ ຫລື ຫລືບຟ້າ)
   - ກອນອ່ານອັກສອນສັງວາດ (ມີຄຳກ່າຍ ທີ່ເປັນອັກສອນຄູ່)
   - ກອນອ່ານສັບພະກອດ ຫລືທຽມແອກ
4. ກອນຮ່າຍ ມີຫລາຍຢ່າງ
   - ກອນຮ່າຍສູດຂວັນ
   - ກອນຮ່າຍສຳລັບເທດ (ຮ່າຍຍາວ ເທດພຣະເວດ)
5. ກອນຜະຫຍາ ຫລື ກອນຍ່ອຍ ຫລື ກອນຂັບ
   - ກອນຂຶ້ນ
   - ກອນລົງ
6. ກອນໂຄງ
   - ໂຄງ 5 ຫລື ວິຊຸມາລີດັ້ນ
   - ໂຄງສຸພາບ ຫລື ມະຫາສິນທຸມາລີ
7. ກອນໂສກ ຫລືສານໂສກ ຫລື ສະໂຫລກ
   - ໂສກສອງ
   - ໂສກສາມ
   - ໂສກສີ່
   - ໂສກຫ້າ
   - ໂສກຫົກ
   - ໂສກເຈັດ (ຄືກັບກາບ ຫລື ເປັນກາບ)

**ຫມາຍເຫດ:** ມາຮອດດຽວນີ້ ຫລາຍຮູບແບບ ບໍ່ເປັນທີ່ນິຍົມແຕ່ງ ຫລືບໍ່ມີຜູ້ແຕ່ງໄດ້ແລ້ວ ແຕ່ກໍເກີດມີຮູບແບບໃໝ່ ຂຶ້ນມາແທນ ເຊັ່ນ ກອນບົດເພງ (ກອນແປດ ແບບຂອງໄທ) ຫລື ກອນເສລີ

## ຂ/2. ເນື້ອເລື່ອງ-ສາລະ

### ມີທັງຄໍາສັ່ງສອນທາງສາສະໜາ, ຄໍາສັ່ງສອນທາງໂລກ, ຕໍາລາຢາ

ມີທັງຕໍາລາໂຫຣາສາດ, ກົດໝາຍ (ທັມມະສາດຕ່າງໆ), ວັນນະຄະດີ ປະເພດນິທານ ອະພິນິຫານ ຄວາມຮັກ ສົງຄາມ, ຕໍານານການສ້າງບ້ານ ສ້າງເມືອງ, ພື້ນເລື່ອງບັນທຶກປະຫວັດສາດ (ພົງສາວະດານ ...) ປາກົດວ່າ ກວມລວມເອົາເກືອບທຸກໆ ຫົວເລື່ອງ ບໍ່ຕ່າງຫຍັງກັບຫົວເລື່ອງທີ່ປະພັນກັນໃນຍຸກສະໄໝນີ້

ໂດຍສະເພາະຄໍາສັ່ງສອນໃນທາງໂລກ ແມ່ນຫລາກຫລາຍຄົບຖ້ວນສົມຄວນ, ຍໍຍົກສະເພາະໝວດທີ່ ເປັນຄໍາສອນ ຄະຕິເຕືອນໃຈ ເຊິ່ງມີສໍາລັບທຸກໆຄົນ ແຕ່ຂັ້ນຄົນທໍາມະດາສາມັນ ຍິງຊາຍ ນ້ອຍໃຫຍ່ (ເລືອກຄູ່ຄອງ) ເຖິງຂັ້ນຜູ່ປົກຄອງແຕ່ລະຂັ້ນ (ພະຍາ ເຈົ້າເມືອງ, ຂຸນນາງ, ກວນ, ຂຸນ, ພໍ່ບ້ານ ໃນຄັມພີໂລກ ນິຕິ) ສໍາລັບຜູ່ເຖົ້າ ຜູ່ແກ່ ທັງຍິງທັງຊາຍ ຄົນຜູ່ເປັນພໍ່ເປັນແມ່ ນັກບວດ ຄູອາຈານ (ໂລກະນິຕິ ຄໍາໂຄງ ແລະ ຮີດພຣະຄອງຈົວ ຢູ່ໃນຮີດ 12 ຄອງ 14 ຮີດຜົວຄອງເມຽ ...) ຜູ່ເປັນພໍ່ແມ່ ເຖົ້າແກ່ ຕ້ອງບອກສອນລູກຫລານ ແນວໃດ (ອິນທິຍານສອນລູກ, ແມ່ນາງອົ້ວສອນລູກສາວ, ປູ່ສອນຫລານ ...)

### ປະເພດຄໍາສອນຜູ່ຍິງ ໃນການປະພຶດປະຕິບັດຕົນ

ຈາກໜັງສື "ອິນທິຍານສອນລູກ" (ສາວ) ທີ່ບອກວ່າ: ເປັນສາວເປັນນາງ ເວລາໄປຫາພະສົງນັ້ນ ບໍ່ຄວນໄປ ຜູ່ດຽວ ແລະ ໄປຍາມກາງຄໍ່າກາງຄືນ ເພາະບໍ່ງາມ ແລະ ອາດເປັນອັນຕະລາຍໄດ້ ທັງແກ່ຕົນເອງ ແລະ ພຣະຕົນນັ້ນ ກໍອາດມົວໝອງໄປນໍາ ຄືອາດຈະເປັນການໄປເຮັດໃຫ້ເກີດກິເລດຕັນຫາ ຫລືຢ່າງອື່ນໆໄດ້

ຄໍາກອນກ່າວວ່າ : ( ອິນທິຍານສອນລູກ, ສະຖາບັນຄົ້ນຄວ້າ ສິລະປະ ວັນນະຄະດີ 1987, ຫນ້າ45)

| | | |
|---|---|---|
| ອັນນຶ່ງ | ຢ່າໄດ້ເຂົ້ານັ່ງໃກ້ | ຄັ້ງຽວພາກບານລຸກ |
| ຊາດທີ່ | ແນວມະຫາເຖນ | ດັ່ງກຸນຊະໂລຍ້ອຍ |
| ເພິ່ນຫາກ | ລືຊາຊ້າງ | ພາຍສະດໍຕົວອາດ |
| ໃຜຜູ່ | ລວນນັ່ງໃກ້ | ງາຊ້າງຊິສຽບແທງ ບໍ່ຢ່າແລ້ວ |

ແລ້ວກໍບອກວ່າ ສິ່ງທີ່ຄວນປະຕິບັດ ເປັນຢ່າງໃດ ຈຶ່ງງາມເໝາະສົມ ເຊັ່ນບອກວ່າ ເວລາເອົາຂອງໃຫ້ທານ ຕ້ອງໃຫ້ສະອາດ (ອັນນີ້ ສອດຄ່ອງກັບຫລັກອະນາໄມສາມສະອາດ) ແລະ ຕົນເອງກໍຕ້ອງຮຽບຮ້ອຍ (ຢ່າປະ

ປ່ອຍຜົມຊ່າງຊະ ເປັນຕົ້ນ ບໍ່ຊັ້ນອາດຈະມີເສັ້ນຜົມຫລົ່ນໄປຖືກຂອງກິນ ເຊິ່ງໃນຫລັກການສາກົນກໍຖືວ່າແມ່ນສິ່ງຮັບບໍ່ໄດ້ຄືກັນ)

( ອິນທິຍານສອນລູກ ໜ້າ 20 )

| | | |
|---|---|---|
| ໃຫ້ເຈົ້າ | ລຸກແຕ່ເຊົ້າ | ປະສິງແຕ່ງຈັງຫັນ |
| ຍາມເມື່ອ | ບາຍຂອງທານ | ໃຫ້ສວ່າຍສີສິງລ້າງ |
| ຊື່ວ່າ | ກິນທານນີ້ | ທຳຕົວໃຫ້ປານິດ |
| ອັນວ່າ | ຜົມເກດເກົ້າ | ຄຽນໄວ້ຢ່າມາຍ |

**ປະເພດສິ່ງເສີມຄວາມສາມະຄີ ໃຫ້ມີຈິດໃຈກວ້າງຂວາງເອື້ອເຟື້ອ**

- ໄມ້ລຳດຽວລ້ອມຮົ້ວບໍ່ໄຂວ່ ໄພ່ບໍ່ພ້ອມແປງບ້ານບໍ່ເຮືອງ
- ໃຫ້ເຈົ້າຟັນເຮືອໄວ້ ຫລາຍລຳແຮທ່າ ໃຫ້ເຈົ້າມ່າເຂົ້າໄວ້ ຫລາຍບ້ານເພື່ອເມືອງ
- ເຮືອຄາແກ້ງ ກວຽນເຫັນໃຫ້ກວຽນແກ່ ບາດວ່າຮອດແມ່ນ້ຳ ເຮືອຊິໄດ້ແກ່ກວຽນ
  (ມະຫາບຸນຍົກ ແສນສຸນທອນ, ຜະຫຍາຍ່ອຍ, ໂຄງການປົກປັກຮັກສາໜັງສືໃບລານລາວ ການຮ່ວມມື ລາວ-ເຢຍຣະມັນ 2.000 )

- ຊື່ວ່າຈັບໃສແຈ້ງ　　　ດວງດຽວບໍ່ມີຊື່ນ
  ດາວຢູ່ລ້ອມ　　　ຫລາຍຊັ້ນກໍຈິ່ງເຮືອງ

**ສອນໃຫ້ກະຕັນຍູຮູ້ຄຸນ ພໍ່ແມ່ ຄູບາອາຈານ ຫມູ່ເພື່ອນ**

- ຊີ້ນບໍ່ຂາດ ບໍ່ໃຫ້ຄຸງຂຽງ　　　ການເມືອງມີ ອ້າຂໍໄປຄ້ຳ
  ນ້ຳພຽງຄໍຂໍຢັ່ງ　　　ນ້ຳພຽງຝັ່ງຂໍລອຍ (ໜັງສືສຽວສະຫວາດ)

**ຕັກເຕືອນໃຫ້ຮູ້ກາລະເທສະ ແມ່ນແຕ່ກິນ ກໍໃຫ້ຮູ້ເລືອກກິນ**

- ເຫລືອແຮງແຮ້ງ ບິນແຮງອິດອ່ອນ
  ລົມບໍ່ມາຊ່ອຍແຮ້ງ ບິນໄດ້ກໍບໍ່ແຮງ
- ຂອງບໍ່ເປັນຕາຈ້ຳ ຢ່າໄດ້ຈຸ່ມລົງຕັກ
  ຂອງບໍ່ເປັນຕາກັດ ຢ່າກິນຊິພອນທ້ອງ
- ຂອງບໍ່ເປັນຕາສົ້ມ ຢ່າງົມກິນຊິສົ້ມປາກ
  ມັນຊິຢາກແກ່ທ້ອງ ທ່ຽວຂີ້ຍັ່ງຄືນ
- ຂອງກິນຫນ້ອຍ ຈົບໃຈຜູ້ແບ່ງ
  ເພິ່ນແບ່ງໃຫ້ ບໍ່ປານເຈົ້າແບ່ງເອົາ

*(ມະຫາບຸນຍົກ ແສນສູນທອນ ປຶ້ມທີ່ອ້າງແລ້ວ)*

**ເຕືອນສະຕິບໍ່ໃຫ້ອວດອົ່ງ ທະນົງໂຕ**

- ຊື່ວ່າຈັນໃສແຈ້ງ ບໍ່ປານແສງສຸລິເຍດ
  ແສງກະບອງພື້ນເຫລົ້ມ ບໍ່ໃສແຈ້ງດັ່ງພະຈັນ
- ເຫັນວ່າໄດ້ໜ່ວຍແກ້ວ ຢ່າຟ້າວເປີບໃຈຫລາຍ
  ບາດວ່າໂຮງໆໃສ ໜ່ວຍຂວາງໃຜຊິຮູ້
- ຢ່າໄດ້ກົດເຂົາຍ້ອງ ຍໍໂຕຜິດຮີດ
  ຢ່າໄດ້ຫວິດໆເວົ້າ ປະສົງຂຶ້ນອົ່ມເຂົາ

**ເຕືອນໃຫ້ນັບຖື ແມ່ຍິງ ໃຫ້ກຽດ ບໍ່ໝິ່ນປະໝາດ**
**(ສອດຄ່ອງຫລັກການສົ່ງເສີມບົດບາດ ຍິງຊາຍ ແລະ ປ້ອງກັນການແຜ່ລາມໂລກເອດ)**

- ເຫັນເມຽເພິ່ນ ໃຫ້ຄຶດພ້ຽງມານດາ
  ເຫັນລູກສາວເພິ່ນ ໃຫ້ດູດານ້ອງນຸ່ງ

**ບອກສອນໃຫ້ຮູ້ຄຸນຄ່າ ຂອງວິຊາຄວາມຮູ້ ໃນຄວາມພຽນໃນການຮຽນ**

| | |
|---|---|
| - ເງິນເຕັມພາ | ບໍ່ທໍ່ຜະຫຍາເຕັມປູມ |
| - ສາດຕະສິນ | ຄວນຮ່ຳຮູ້ຮຽນເອົາ |
| ເປັນດັ່ງນ້ຳ | ໃນເຄືອເຂົາຕົ້ນໄມ້ |
| ກ່ອນຈະເກັບເອົາ | ດອກໜາກນັ້ນນາ |
| ຄວນເກັບທຸກຄ່ຳເຊົ້າ | ລວດໄດ້ເຫລືອຫລາຍ |

**ຫລືອີກສຳນວນນຶ່ງວ່າ**

- ຢ່າສຳຄັນວ່າ ການສຶກສາເປັນຂອງເລັກນ້ອຍ
  ຈົ່ງໃຫ້ການສຶກສາຝັງແໜ້ນໃນໃຈຢູ່ສະເໝີ
  ຈົ່ງເບິ່ງຕົວຢ່າງປວກ ແລະ ຢາດນ້ຳ
  ການສຶກສາຈະສຳເລັດບໍລະບູນໄດ້ ຕ້ອງໃຊ້ເວລາເຫິງນານ
  ( ຈາກ ຄັມພີໂລກນິຕິ, ມະຫາສິລາ ວີຣະວົງສ໌, ພ.ສ. 2508:
  ສຸພາສິດຄຳໂຄງລາວ, ສະຖາບັນສິລະປະວັນນະຄະດີ ແຫ່ງຊາດ 1988)

**ຢ່າເບິ່ງບັນຫາແຕ່ດ້ານດຽວ ໃຫ້ພິຈາລະນາຖີ່ຖ້ວນ ດ້ວຍການເວົ້າ ເປັນສຳນວນປຽບທຽບ ເຊັ່ນ :**

- ຕາບອດຄຳຊ້າງ

**ສະຫລູບ:**

ເຫັນໄດ້ວ່າ ຄຳຜະຫຍາເຫລົ່ານີ້ ມີເນື້ອໃນບໍ່ພຽງແຕ່ມາໃຫ້ຂໍ້ຄຶດ ສາລະປະໂຫຍດ ແຕ່ມີສຳນວນໂວຫານເລິກເຊິ່ງ ເຖິງຈະໃຊ້ຄຳສັບກົງໄປກົງມາ ແຕ່ຫາກກິນໃຈ ເຊິ່ງໃນປັດຈຸບັນຍາກທີ່ຈະມີຜູ່ເຮັດໄດ້ດີຢ່າງນັ້ນ. ດັ່ງນັ້ນ ບໍ່ພຽງແຕ່ເຮົາຈະໄດ້ຄວາມມ່ວນທີ່ເປັນຄະຕິສະກິດໃຈ ແຕ່ເຮົາຍັງໄດ້ຄວາມຮູ້ດ້ານການປະພັນ ສຳນວນຕ່າງໆ ນຳອີກດ້ວຍ

## II. ຄວາມບໍ່ຕໍ່ເນື່ອງ ໃນການຖ່າຍທອດ ໃນລະຍະລາວເສຽເອກະລາດ

ຂໍ້ຄວາມທີ່ສະເໜີມາຂ້າງເທິງ ໄດ້ຊີ້ໃຫ້ເຫັນຄວາມເກົ່າແກ່ຫລາກຫລາຍຂອງໜັງສືໃບລານ ຂອງພວກເຮົາ, ບໍ່ຕ່າງຫຍັງກັບສະພາບການໃນປະເທດອື່ນໆໃນໂລກ ສາຍທານການສ້າງວັນນະຄະດີໃສ່ໃບລານ ແລະ ການ ຊົມໃຊ້ໄດ້ຂາດສະບັ້ນໄປຫຼາຍຕອນໃນປະຫວັດສາດລາວ ຕັ້ງແຕ່ລາວເລີ່ມເສຽເອກະລາດທາງດ້ານການເມືອງ ເທື່ອລະຫລາຍໆປີຕິດຕໍ່ກັນ ຄື ແຕ່ລະຫວ່າງ ຄ.ສ. 1572-1603 ກົງກັບສະໄໝ ພຣະຍາແສນສຸຣິນ (ເສຽໃຫ້ ພະມ້າ) ແລະເສຽຕິດຕໍ່ກັນຍາວນານ ແຕ່ ຄ.ສ. 1779 ໃຫ້ແກ່ສະຫຍາມ ຮອດ ຄ.ສ. 1893 ແລ້ວມາຕໍ່ໃສ່ຝຣັ່ງ ຮອດປີ 1954 (ລັດຖະບານຝະຣັ່ງ ເຊັນສັນຍາ ທີ່ເຊີແນວມອບເອກະລາດໃຫ້ລາວ ໃນວັນທີ21ກໍລະກົດ 1954 ຕໍ່ແຕ່ນັ້ນມາ ກໍແມ່ນສົງຄາມພາຍໃນ ມີການຕໍ່ສູ້ກັນດ້ວຍກຳລັງອາວຸດ ແລະແນວຄິດຈິດໃຈ ວັດທະນະທັມ ຈົນຮອດ 1975 ຈຶ່ງຖືວ່າເປັນເອກະລາດຢ່າງສົມບູນໃນທຸກດ້ານ. ຮວມເປັນເກືອບ 200 ປີຕິດຕໍ່ກັນ ສະພາບ ດັ່ງກ່າວເຮັດໃຫ້ວັນນະຄະດີຂົວຕໍ່ແຫ່ງອະດີດ ກັບປະຈຸບັນຂອງປະຊາຊາດ ສູນເສຽຄຸນຄ່າບົດບາດລົງ; ຕົວຢ່າງ ວັນນະຄະດີເລື່ອງບົ່ງ ທີ່ນັກປາດອາຈານຫລາຍຄົນຕີລາຄາວ່າເປັນ ມະຫາກາບບົ່ງແຫ່ງພາກພື້ນ ຄື "ພື້ນທ້າວຮຸ່ງທ້າວເຈືອງ" ທີ່ຂຽນເປັນບົດກອນຍາວເຖິງ 5,000 ບາດນັ້ນ ບໍ່ເປັນທີ່ຮູ້ຈັກ ທັງບໍ່ໄດ້ມີບົດບາດ ຮັບໃຊ້ ສ້າງສາລະບັນເທີງໃຫ້ແກ່ຊີວິດວັດທະນະທັມຄົນລາວ ຫລືມີສ່ວນສຳຄັນໃນການສຶກສາ ຂັ້ນຄູອາຈານ ສອນວັນນະຄະດີຫລາຍຄົນ ໃນລະດັບມັດທະຍົມສຶກສາ ວິທະຍາໄລຄູ (ອະນຸປະລິນຍາ) ຫລື ແມ່ນແຕ່ບາງຄົນ ຂັ້ນມະຫາວິທະຍາໄລກໍບໍ່ຮູ້ຈັກ ແລະນຳໃຊ້ໜັງສືເລື່ອງນີ້ຢ່າງຈິງຈັງ (ໃນຫລັກສູດ ການຮຽນການສອນພາສາ ວັນນະຄະດີລາວ ລະດັບ ມ. 4.5.6 ມີຄຳກອນ ຕົວຢ່າງເລື່ອງນີ້ ປະມານ 6-7 ໜ້າ ພ້ອມດ້ວຍຫຍໍ້ເລື່ອງ ສ່ວນໃນຫລັກສູດສ້າງຄູ ບໍ່ມີການເວົ້າເຖິງໂດຍກົງ ມີແຕ່ຍົກແບບຢ່າງການແຕ່ງກອນບາງຊະນິດເທົ່ານັ້ນ)

### ຄົນເຮົາ ເຂົ້າໃຈ ແລະຮຽນຮູ້ອະດີດຂອງປະເທດຊາດບ້ານເມືອງຂອງຕົນ ຈາກຫຍັງ ?

ຈາກການອ່ານສຶກສາເອກະສານເກົ່າ ສິລາຈາລຶກ ວັດຖຸບູຮານ ເອກະສານບັນທຶກປະຫວັດສາດ ທໍ່ນັ້ນບໍ່? ຜູ້ຈະອ່ານຈະຮຽນແນວນັ້ນ ກໍຄົງມີແຕ່ນັກປາດອາຈານຈຳນວນໜ້ອຍດຽວທໍ່ນັ້ນ ການສຶກສາຮຽນຮູ້ອັນໃດ ຈຶ່ງຈະໃຫ້ພາບຊີວິດຈິດໃຈຜູ້ຄົນ ປະເພນີຮີດຄອງຂອງຜູ້ຄົນຢ່າງມີຊີວິດຊີວາໄດ້ ຫລາຍຄົນຄົງບໍ່ປະຕິເສດວ່າ ໜັງສືປະເພດວັນນະຄະດີ ບໍ່ວ່າກາບກອນກໍຄືຮ້ອຍແກ້ວ ທີ່ປະພັນໄວ້ໃນໃບລານນັ້ນ ສ່ອງແສງໄດ້ດີກວ່າໝູ່ ທັງເຮັດໃຫ້ຜູ້ອ່ານມ່ວນຊື່ນເບີກບານໃຈໄປນຳ ຈົນນຳມາຂັບລຳ ເທດສະໜາເຜີຍແຜ່ສືບຕໍ່ກັນມາ

ຕົວຢ່າງ: ເພື່ອຢັ້ງຢືນວ່າ ສົ້ມປາ ເປັນອາຫານທີ່ມີມາແຕ່ບູຮານະການຢ່າງນຶ່ງຂອງຄົນລາວ ເຮົາຈະເອົາເອກະສານຫລັກຖານອັນໃດມາຢັ້ງຢືນ ມີຢູ່ຄຳພີດີກາແບບໃດ ຕຳນານປະຫວັດສາດມີບໍ່? ບໍ່ມີຢ່າງແນ່ນອນ ເພາະເອກະສານປະຫວັດສາດ ສ່ວນໃຫຍ່ຈະເວົ້າແຕ່ເລື່ອງເຫດການບ້ານເມືອງ ການເສິກສົງຄາມ ແຕ່ຖ້າອ່ານ "ພື້ນທ້າວເຈືອງ" ເຮົາມີສິ່ງຢັ້ງຢືນ ເພາະເພິ່ນຂຽນໄວ້ວ່າ " ສົ້ມຢູ່ບັ້ງ ຈົກອອກມາຫລົບ..." ຫລືວ່າ "ຫົວສິ້ນແມ່ຍິງລາວສະໄໝກ່ອນນິຍົມສີແດງ" ທີ່ບົດກະວີພັນລະນາວ່າ

" ເຕື່ອງໆສິ້ນ ຫົວແດງດູອາດ ... " (ທ້າວຮຸ່ງທ້າວເຈືອງ ບັ້ນ: ທ້າວຮຸ່ງເຮັດນາຫາປາ ແລະ ໂຫ່ເນື້ອ ແລະບັ້ນ: ທ້າວຮຸ່ງສົ່ງຊະເລີຍເສິກເມືອໃຫ້ແມ່...) ເປັນຕົ້ນ ດັ່ງນັ້ນຈຶ່ງເຫັນໄດ້ວ່າ ການອ່ານການສຶກສາວັນນະຄະດີ ວັນນະກຳທ້ອງຖິ່ນ ມີຄວາມສຳຄັນຕໍ່ຄົນຮຸ່ນໃໝ່ ເພາະວັນນະຄະດີເປັນຂົວຕໍ່ໃຫ້ອະດີດ ມາຫາປັດຈຸບັນ ສືບທອດຂໍ້ມູນທາງດ້ານແນວຄຶດຈິດໃຈຢ່າງມີຊີວິດຊີວາ

ຍ້ອນວ່າ ເຫດການບ້ານເມືອງລະຫວ່າງ 200 ກວ່າປີກ່ອນ (ນັບແຕ່ປີຄ.ສ.1779) ຄືລະຫວ່າງ ປະເທດລາວ ຄົນລາວຕົກຢູ່ໃນສະພາວະໄຮ້ເສລີພາບໃນການປົກຄອງຕົນເອງ ການສຶກສາຮໍ່າຮຽນຕ່າງໆ ໃນສະຖາບັນການສຶກສາ ຄື ວັດວາອາຣາມ ສຳນັກສົງ ຕົກຕ່ຳຊຸກຊ້າ ບໍ່ພຽງພໍຕໍ່ເນື່ອງດີ

ແຕ່ຈາກປີ 1975 ມາເຖິງດຽວນີ້ ກໍນັບວ່າເປັນເວລາເກືອບ 30 ປີ ແລ້ວ ທີ່ປະຊາຊົນຄົນລາວເຮົາ ເປັນເອກະພາບກັນ ມີເອກະລາດ ແລະ ສັນຕິພາບຖາວອນ

## III. ສະພາບວິທີການຖ່າຍທອດ ໃນອະດີດ ແລະ ປັດຈຸບັນ

ປະຊາຊົນລາວໃນຕົວເມືອງກວ່າ 50% ໃຊ້ຈ່າຍເງິນທີ່ຊອກຫາມາໄດ້ ຊົມຊື້ສິ່ງບໍລິໂພກທາງດ້ານບັນເທີງ ອັນເປັນຜະລິດຕະພັນວັດທະນະທັມ ທັງພາຍໃນ ແລະຕ່າງປະເທດ ຫລາຍສົມຄວນ ເຊັ່ນ ກະແຊັດເພງ ວິດີໂອ ໝໍລຳ ລະຄອນ ຊີດີ ດີວີດີ ຄອມພິວເຕີ້ ປຶ້ມອ່ານ ກາຕູນ ...

ຕົວຢ່າງ: ນະຄອນຫລວງວຽງຈັນ ມີ 100,000 ກວ່າຄອບຄົວ (ສະຖິຕິ 2003), ໃນນັ້ນ 30.000 ກວ່າ ຄອບຄົວ ມີຖານະດີຫາປານກາງ ມີລູກຢູ່ໃນໄວໜຸ່ມສາວ 3-4 ຄົນ ຄິດໄລ່ຄ່າໃຊ້ຈ່າຍຊື້ຜະລິດຕະພັນວັດທະນະທັມ ເພື່ອຄວາມບັນເທີງຕໍ່ຄອບຄົວໂດຍປະມານ ຈະເຫັນເປັນຕົວເລກ ດັ່ງນີ້ :

| ປະເພດສິນຄ້າ | ຈ.ນ/ຄຄ | ລ.ຄ/ຫນ.ກ | ມູນຄ່າ/ຄຄ/ດ | ມູນຄ່າລວມ 30.000 ຄຄ/ກົບ | ມູນຄ່າຕໍ່ປີ × 12 ດ. |
|---|---|---|---|---|---|
| ກະແຊດ | 5 ມ້ວນ | | | | |
| ພາຍໃນ (ກ) | | 10.000 | 50.000 | 1.500.000.000 | 18.000.000.000 |
| ຕ່າງປະເທດ (ຂ) | | 30.000 | 150.000 | 4.500.000.000 | 54.000.000.000 |
| ດີວີດີ ຮູບເງົາ | 10 ແຜ່ນ | 5.000 | 50.000 | 1.500.000.000 | 18.000.000.000 |
| ລະຄອນ ເຊົ່າ/ຊື້ | | 20.000 | 200.000 | 6.000.000.000 | 72.000.000.000 |
| 2 ປະເພດສິນຄ້າ | | | | 3.000.000.000 | 36.000.000.000 |
| | | | | 10.500.000.000 | 1.260.000.000.000 |

ເບິ່ງຕົວເລກນີ້ແລ້ວ ບໍ່ເປັນໜ້າເຊື່ອ ແຕ່ໃນຄວາມເປັນຈິງ ບາງທີອາດຈະສູງກວ່ານີ້ອີກ ເບິ່ງແຕ່ຈໍານວນຮ້ານຂາຍເຄື່ອງປະເພດນີ້ ທີ່ມີຢູ່ທົ່ວທຸກແຈເມືອງ

*(ຍັງບໍ່ເວົ້າເຖິງ ສິ່ງຂອງວັດຖຸວັດທະນະທັມອື່ນ ທີ່ແຝງຊ້ອນເຂົ້າມາໃນຮູບແບບສື່ແນວອື່ນ)*

ຖ້າຫາກວ່າສາມາດນໍາໃຊ້ເງິນເຫລົ່ານີ້ສ່ວນນຶ່ງ ມາພັດທະນາສົ່ງເສີມວັນນະຄະດີທ້ອງຖິ່ນ ຫລືອັນທີ່ຂຽນໄວ້ໃນໃບລານ ຈົກອອກມາສ້າງເປັນສື່ສາລະບັນເທີງ ຜ່ານການປຸງແຕ່ງພໍເໝາະພໍງາມ ເຊັ່ນສ້າງໝໍອັບໝໍລໍາພື້ນເມືອງ ຄະນະນັກສະແດງໝໍລໍາ (ດຽວນີ້ອາດມີພຽງ 2 ຄະນະເທົ່ານັ້ນ) ສ້າງເປັນລະຄອນເວທີ ລະຄອນວິທະຍຸ ລະຄອນໂທລະພາບ ປຶ້ມກາຕູນ ລາຍການຕອບຖາມສົນທະນາ ຫລືຫລິ້ນທວາຍ ອອກທາງໂທລະພາບ ວິທະຍຸ ຫລືອັດເປັນຊີດີ ດີວີດີ ຈະເປັນໄປໄດ້ບໍ່? ອາດຈະສ້າງຕັ້ງກອງທຶນສົ່ງເສີມ (ກອງທຶນເອກະຊົນ ຫລືມູນນິທິ ສະມາຄົມ) ເຮັດໃຫ້ມີກິດຈະກໍາກ່ຽວກັບເລື່ອງນີ້ຫລາຍຂຶ້ນ ຈະມີໝາກຜົນແນວໃດ? ຫຼາຍຄົນໝໍອັບ ໝໍລໍາ ມີວຽກເຮັດງານທໍາ ນັກແຕ້ມ ນັກແຕ່ງ ພັດທະນາສີມື ສ້າງຜົນງານ ... ນັກສະແດງລະຄອນມີໂອກາດສູງຂຶ້ນ ... ເວົ້າລວມ ປະຢັດເງິນຕາອອກຕ່າງປະເທດ ແລະ ສ້າງວຽກເຮັດງານທໍາ ໃຫ້ແກ່ຄົນຈໍານວນນຶ່ງໄດ້

## ຄວາມຈຳເປັນທີ່ຈະຕ້ອງສືບທອດ

ເປັນຄວາມຈຳເປັນພາວະວິໄສບໍ່? ດັ່ງທີ່ກ່າວມາຂ້າງເທິງນັ້ນ ສາມາດນຳມາຊົມໃຊ້ໄດ້ບໍ່? ຫລາຍຄົນອາດຈະຄຶດວ່າ ບໍ່ຈຳເປັນຈະຕ້ອງຂຸດຄົ້ນສິ່ງເຫລົ່ານີ້ ມາເວົ້າມາຮຽນມາສອນກັນດອກ ແຕ່ງເອົາ ໃຫມ່ກໍໄດ້, ຈະແປຫລືກ່າຍເອົາຂອງຕ່າງປະເທດ ກໍສະບາຍ ມີຫລາຍ ທັງມ່ວນ ທັງສະດວກ ຍິ່ງປັດຈຸບັນນີ້ ຍິ່ງສະດວກ ລາຄາຖືກ. ປຶ້ມ ສິ່ງພິມ ຜະລິດຕະພັນວັດທະນະທັມເພື່ອບັນເທີງ ຂອງຕ່າງປະເທດມີຢ່າງມາກມາຍໃຫ້ເລືອກເສບ ເລືອກຊົມ (ຢູ່ຕາມຕະຫລາດຮ້ານຄ້າມີແຜ່ນຊີດີ ເຄື່ອງຫລິ້ນວີຊີດີ ຂາຍແບກັບພື້ນດິນ ...) ປຶ້ມອ່ານຫລາຍພາສາ ບໍ່ຈຳເປັນຈະມາຖອດມາກ່າຍ ເລື່ອງໃນໃບລານໃຫ້ຫຍຸ້ງຍາກ ເປືອງເງິນ ເສຽເວລາ ງລງ ແນວຄວາມຄຶດດັ່ງກ່າວ ບໍ່ໄດ້ສະແດງໂຕອອກຢ່າງກົງໆ ເປີດເຜີຍດອກ ແຕ່ມັນຊ້ອນເຊື່ອງຢູ່ໃນຮູບການອື່ນ ນັ້ນກໍຄືຄວາມເມີນເສີຍ ບໍ່ສົນໃຈ ບໍ່ສົ່ງເສີມຜູ່ພະຍາຍາມ ບໍ່ຍົກຍ້ອງຜູ່ເຮັດໄດ້ ບໍ່ໃຫ້ໂອກາດແກ່ຜູ່ຢາກຮ່ຳຮຽນ ທັງວາງເງື່ອນໄຂເພື່ອຖ່ວງດຶງ ຂັດຂວາງແບບອ້ອມຄ້ອມ ຫລືຫລາຍຄົນອາດຈະເວົ້າວ່າ ໃນສະພາບເປັນປະເທດດ້ອຍພັດທະນາທຸກຈົນ ຕ້ອງລົບລ້າງຄວາມທຸກຈົນສາກ່ອນ ຈຶ່ງຈະສາມາດຂຸດຄົ້ນ ແລະ ຊົມໃຊ້ວັນນະຄະດີບູຮານໄດ້ ແຕ່ພວກເຮົາເຫັນແລ້ວວ່າ ເຖິງຈະທຸກຈົນ (ຕາມມາດຕະຖານສາກົນວາງໄວ້) ແຕ່ປະຊາຊົນຄົນລາວ ບໍ່ຍອມທຸກຈົນດ້ານວັດທະນະທັມຈິດໃຈເດັດຂາດ ປະຊາຊົນຄົນລາວມັກມ່ວນ ຊຸມແຊວ ຂັບລຳງັນບຸນກັນ ຫລິ້ນກິນ ແລະມີໂອກາດຊົມບັນເທີງຄະດີອັນຍອດຍິ່ງຂອງໂລກ ເທົ່າໆປະຊາຊົນຊາດອື່ນ ທຸກປະເທດໃນໂລກ. ມີແຜ່ນຊີດີ ຮູບເງົາ ລະຄອນ ເພງສາກົນ ປຶ້ມອ່ານ ວາລະສານ ຄອນເສີດຕ່າງປະເທດ ການສະແດງເທິງເວທີ ເກມຫລິ້ນ ຄອມພິວເຕີ້ ເຄື່ອງໄອທີ ... ສິ່ງເຫລົ່ານີ້ປະຊາຊົນລາວໄວໜຸ່ມຫາກາງ ໃນຕົວເມືອງໃຫຍ່ສ່ວນນຶ່ງ ເຂົ້າເຖິງຢ່າງສະດວກ ແລະມັນກໍຈະຍິ່ງແຜ່ລາມອອກໄປຢ່າງບໍ່ສາມາດຢຸດຍັ້ງໄດ້ ໃນອີກບໍ່ດົນມັນຈະກາຍເປັນສ່ວນນຶ່ງຂອງຮູບແບບການດຳລົງຊີວິດແລ້ວ

ໃນໂລກນີ້ ຊາດໃດໆ ກໍຍ່ອມເຊີດຊູບົດວັນນະກຳຂອງຕົນອອກອວດອ້າງ ເຜີຍແຜ່ກັນທັງນັ້ນ ໃຫ້ວ່າໃຜມີດີຫຍັງ ກໍນຳມາບອກກ່າວກັນ ເພາະວັນນະຄະດີ ແມ່ນອາພອນປະດັບໂລກ ປະດັບຊາດ ເປັນເອກະລັກຂອງຊາດຢ່າງນຶ່ງ ເຊັ່ນເລື່ອງ "ໂຣເມໂອ ກັບ ຈູລຽດ" (Romeo & Juliet,SHAKESPEAR) ຂອງ ທ່ານເຊັກສະເປັຽຣ໌ ຂຽນໄວ້ແຕ່ສະຕະວັດ ທີ 17 ນິຍາຍຮັກອະມະຕະຂອງກຣີກ ກໍຍັງຖືກນຳມາສ້າງເປັນລະຄອນພາບພະຍົນ ໃຫ້ຄວາມສຸກສັນບັນເທີງແກ່ຄົນທົ່ວໂລກມາຕະຫລອດຫລາຍຮ້ອຍປີ ແລະ ຍັງຈະສືບຕໍ່ເປັນໄປ, ເລື່ອງ" ຄົນອະນາຖາ" ຂອງ ວິດຕໍຣ໌ ຮູຍໂກ (Les miserables, Victor HUGO) ຫລືເລື່ອງ "ອານນາກາເຣນີນ" ຂອງທ່ານເລຟ ໂຕນສະຕອຍ (Anna Karenina, Lev TOLSTOI) ແລະ ເລື່ອງໆອື່ນໆ ກໍຖືກ

ນຳມາສ້າງແລ້ວສ້າງອີກ ໃຫ້ຄວາມສຸກ ສະນັ້ນ ການນຳເອົາວັນນະຄະດີອັນຍອດຍິ່ງຂອງລາວເຮົາອອກມາເຜີຍແຜ່ໃນຮູບການໃໝ່ ກໍຄົງເປັນການປະຢັດເງິນຕາໄດ້ສ່ວນນຶ່ງ ຫລື ຖ້າເຮັດໄດ້ດີ ມີມາດຕະຖານ ກໍຂາຍອອກໃຫ້ຕ່າງຊາດໄດ້ຊົມຊື່ນນຳ

ເພາະ ເພິ່ນກ່າວໄວ້ວ່າ (ສຸພາສິດບົດນຶ່ງ ໃນຄັມພີໂລກະນິຕິ ບັ້ນບັນດິດ) :
ຄົນຂີ້ຄ້ານ ຈະມີສີລະປະມາແຕ່ໃສ ?
ຄົນບໍ່ມີສີລະປະ ຈະເອົາຊັບ ມາແຕ່ໃສ ?
ຄົນບໍ່ມີຊັບ ຈະເອົາມິດມາແຕ່ໃສ ?
ຄົນບໍ່ມີມິດ ຈະເອົາຄວາມສຸກມາແຕ່ໃສ ?
ຄົນບໍ່ມີຄວາມສຸກ ຈະເອົາບຸນມາແຕ່ໃສ ?
ຄົນບໍ່ມີບຸນ ຈະເອົາຄວາມຈະເລີນມາແຕ່ໃສ ?

(ເຫັນໄດ້ວ່າ ຄວາມຄ້ານ ກັບຄວາມຈະເລີນ ກ່ຽວຂ້ອງກັນ ໃນຍຸກປັດຈຸບັນ ຄຳວ່າ ຈະເລີນ ກໍແມ່ນພັດທະນາ ຫລືບໍ່ທຸກແລ້ວ. ດັ່ງນັ້ນການທີ່ພວກເຮົາທຸກຈົນຢູ່ທຸກວັນນີ້ (ຕາມມາຕະຖານສາກົນ) ເປັນເພາະວ່າເຮົາບໍ່ທັນຈະເລີນ ຫລືພັດທະນາ, ຄວາມບໍ່ຈະເລີນ ຫລືບໍ່ພັດທະນາ ເປັນຍ້ອນຫຍັງນັ້ນ ຄົງມີຫລາຍສາເຫດ ເຊັ່ນ ຖືກສົງຄາມທຳລາຍ ຖືກກົດຂີ່ ເປັນຫົວເມືອງຂຶ້ນ ແລະອີກສາເຫດນຶ່ງ (ຕາມສຸພາສິດ ເພາະ 2 ອັນທຳອິດ ເຊົາໄປແລ້ວ) ແມ່ນຄວາມຂີ້ຄ້ານ ແລະ ບໍ່ດຸຫມັ່ນ

ອີກບົດນຶ່ງວ່າ: ບໍ່ມີຊັບແນວໃດ ສະເໝີດ້ວຍສີລະປະ ເພາະວ່າສີລະປະ ໂຈນລັກໄປບໍ່ໄດ້ ສີລະປະເປັນມິດໃນໂລກນີ້ ແລະ ນຳຄວາມສຸກມາໃຫ້ໃນໂລກໜ້າດ້ວຍ

## IV. ການເຜີຍແຜ່ ແລະ ວິທີການຖ່າຍທອດ

ໃນສະໄໝບູຮານ: ຮູບແບບເຜີຍແຜ່ມີຈຳກັດ ໂດຍທົ່ວໄປແມ່ນວິທີປາກເປົ່າ (ມຸຂະປາຖະ) ເລົ່າຄົນຕໍ່ຄົນ ເຊັ່ນການຂັບລຳ ເທດສະໜາ ອ່ານໜັງສືຜູກໃນໂອກາດງັນບຸນຕ່າງໆ (ເຮືອນດີ ງັນກຳ ງັນກອງ... ບາສີສູ່ຂວັນຄົນເຈັບ ເຖົ້າແກ່ອາວຸໂສ, ບາສີຕ້ອນຮັບແຂກຄົນໄປມາ, ສູ່ຂວັນເຮືອນ, ສູ່ຂວັນເຂົ້າ, ຄຳເຢົາຢາ ...); ວິທີການນີ້ມີປະສິດທິພາບດີ ແລະພັດທະນາໄດ້. ການທີ່ເປັນດັ່ງນີ້ ອາດເປັນຍ້ອນວ່າ ການກຳນົດເປົ້າຫມາຍ ແລະເນື້ອໃນທີ່ເລືອກເຟັ້ນມາສື່ອອກ ສອດຄ່ອງກັນດີເປັນລະບົບຕໍ່ເນື່ອງ ເຊັ່ນວ່າ ທຸກວັນສິນ 8 ຄ່ຳ 15 ຄ່ຳ ກໍມີການເທດ

ນິທານທັມມະ ຫລືນິທານຄຳສອນທົ່ວໆໄປ ໃນປາງບຸນພະເວດ ກໍເທດເລື່ອງພະເວດກັນທົ່ວທຸກວັດ ໃນໂອກາດວັນເຮືອນດີ ເຊິ່ງມີບັນຍາກາດເສົ້າໂສກ ກໍເອົາໜັງສືຜູກທີ່ມີເນື້ອເລື່ອງໂສກເສົ້າ ມີການພັດພາກຕາຍຈາກກັນມາອ່ານ ອັນເປັນການຜ່ອນເບົາບັນເທົາຄວາມທຸກໂສກຂອງຜູ້ເປັນເຈົ້າກັມ ຂະນະທີ່ການສູ່ຂວັນແມ່ອອກກຳ ຫລືແຕ່ງດອງ ອັນເປັນວາລະແຫ່ງຄວາມຍິນດີ ມ່ວນຊື່ນ ຄຳສູດຂວັນທີ່ເປັນກອນຮ່າຍ ກໍມີເນື້ອໃນໃຫ້ສາລະບັນເທີງ ຄວາມຮູ້ ບອກສອນແນວຄວນປະພຶດປະຕິບັດ ເຊິ່ງເປັນປະໂຫຍດແກ່ຜູ້ຟັງເປັນທີ່ສຸດ

ຜູ້ເຜີຍແຜ່ ມີໃຜແດ່?: ມີທັງ ພຣະສົງ ໝໍຂັບ ໝໍລຳ ໝໍພາມ ໝໍພອນ ໝໍເຢົາ ຜູ້ເຖົ້າ ຜູ້ແກ່ ອາວຸໂສໃນບ້ານ

## ກ. ຕາຕະລາງ ປຽບທຽບ ວິທີການເຜີຍແຜ່ ສະໄໝບູຮານ ແລະ ປັດຈຸບັນ

| ແບບບູຮານ | ກຸ່ມເປົ້າໝາຍ | ເນື້ອໃນ | ລັກສະນະ | ຜົນທີ່ໄດ້ຮັບ |
|---|---|---|---|---|
| ເທດສະໜາ ຢູ່ໃນວັດ | ຜູ້ເຖົ້າ ຍິງ ຊາຍ | ສັ່ງສອນສິນທັມ ນິທານຊາດົກ | ເປັນລະບົບຕໍ່ເນື່ອງດີ ເປັນລະບຽບ, ມີຄວາມຮັບຜິດຊອບຈະແຈ້ງ | ຍືນຍົງ ຖືກກຸ່ມເປົ້າໝາຍ ບໍ່ສິ້ນເປືອງ ຕື່ມ. ວັດ ແລະພະສົງມີບົດບາດຕໍ່ສັງຄົມ ເປັນທີ່ເພິ່ງທາງໃຈ |
| ຄົບງັນຕ່າງໆ<br>- ເຮືອນດີ<br>- ງັນກຳ<br>- ງັນກອງບຸນ<br>- ສູ່ຂວັນນາກ<br>- ສູ່ຂວັນອອກກຳ,ແຕ່ງດອງ<br>- ສູ່ຂວັນຄົນເຈັບປ່ວຍ | - ຄົນເຖົ້າແກ່ ບ່າວສາວໄວທີ່ພວມຈະເປັນພໍ່ແມ່, ຜູ້ພວມຈະບວດ<br>- ເດັກນ້ອຍ | ຄວາມທຸກໂສກ ການສູນເສຽພັດພາກ, ຄວາມຮັກ ບອກກ່າວເຖິງແບບແຜນການດຳລົງຊີວິດ ເລົ່າເຖິງຄວາມລຳບາກຫຍຸ້ງຍາກ ໃນການຖືພາ | ເປັນລະບົບຕໍ່ເນື່ອງ ທຸກຄົນມີສ່ວນຮ່ວມ ທຸກຄົນຮັບຮູ້ຮ່ວມກັນ ຮັບຜິດຊອບຮ່ວມກັນ | ຖືກກຸ່ມເປົ້າໝາຍ ບໍ່ເສຽເວລາ ແລະສິ້ນເປືອງຕື່ມ ສ້າງຄວາມສາມັກຄີພາຍໃນຊຸມຊົນ ເປັນກຳລັງໃຈຊຸກຍູ້ກັນ |

| | | | | |
|---|---|---|---|---|
| | | ອອກລູກ ລ້ຽງລູກ | | |
| ອັບລຳ ລົງຂວ່າງ ເຢົາຢາຄົນເຈັບ ລົງຜີ | ເຖົ້າແກ່ ບ່າວສາວ ຄົນເຈັບປ່ວຍ | ບັນເທີງ ສັງຄົມ ສາລະ ຄວາມຮູ້ ຕ່າງໆ ໃຫ້ກຳລັງ ໃຈ ປິ່ນປົວຈິດ ບ່າວສາວຮຽນຮູ້ ຈິດໃຈກັນ | ມະຫາຊົນ ກວ້າງ ຂວາງ ເພິ່ງພາຕົນ ເອງກ່ອນ ເປັນ ຂອງສັງຄົມ ທຸກຄົນຮັບຮູ້ | ສັງຄົມອັ້ນບ້ານ ເຂັ້ມແຂງ ມີຄວາມ ໄວ້ເນື້ອເຊື່ອໃຈກັນ ປະຢັດ |

## ຂ. ຮູບແບບການເຜີຍ ວັນນະຄະດີບູຮານ ໃນປັດຈຸບັນ

| ຮູບແບບ | ເປົ້າໝາຍ | ເນື້ອໃນ | ລັກສະນະ | ຜົນທີ່ໄດ້ຮັບ |
|---|---|---|---|---|
| ວັດ/ເທດສະໜາ ເຮືອນບຸນ | ຜູ່ເຖົ້າ ຍິງ ຊາຍ ແມ່ຍິງເປັນສ່ວນໃຫຍ່ | ພະທັມຄຳສອນ ທາງສາສະໜາ | ບໍ່ໜັກແໜ້ນ ຈິງຈັງ | ໜ້ອຍ ຜູ່ຟັງບໍ່ສົນໃຈ |
| ວິທະຍຸ | ທົ່ວໄປ/ໃກ້ ແລະ ໄກ ບໍ່ມີເປົ້າໝາຍ ແນ່ນອນ | ນິທານຂຽນຄືນ ໃໝ່ ສຳລັບເດັກ | ບໍ່ເປັນລະບົບ ບໍ່ຄົ້ນຄວ້າພຽງພໍ | ແຜ່ກະຈາຍໄດ້ ກວ້າງ ແລະ ວ່ອງໄວດີ |
| ປຶ້ມອ່ານ ພາສາ ຕ່າງໆ | ໄວໜຸ່ມ ຜູ່ມັກອ່ານ ມີຈຳນວນຈຳກັດ | ບໍ່ຫລາກຫລາຍ ບໍ່ໄດ້ດັດແປງເຂົ້າ ກັບຍຸກສະໄໝ | ບໍ່ແຜ່ກວ້າງ, ລາຄາແພງ | ບໍ່ທັນສະພາບ ບໍ່ ວ່ອງໄວ ເປັນທີ່ ອ້າງອີງໄດ້ຍືນຍົງ |
| ໂທລະພາບ | ຜູ່ຄົນໃນເມືອງ ຄົນໄວ ກາງ ຫາແກ່ | ບໍ່ຫລາກຫລາຍ ບໍ່ໄດ້ຄົ້ນຄວ້າ ຈິງຈັງ | ລາຄາແພງ ຕ້ອງມີໄຟຟ້າ | ບໍ່ໜັກແໜ້ນ ບໍ່ຍືນ ຍົງ ອ້າງອີງບໍ່ໄດ້ |
| ລະບົບອິນເຕີ ແນດ ແລະ ເວບໄຊ້ | ຈຳກັດແຕ່ຢູ່ໃນເມືອງ ລາຄາແພງ | ບໍ່ກວ້າງ ອັນຕະ ລາຍ | ກາຍແບບຕ່າງ ປະເທດ | ບໍ່ໜັກແໜ້ນ ເຊື່ອຖື ບໍ່ໄດ້ |
| ຊີດີ/ກະແຊັດ/ | ຄົນໜຸ່ມ ໃນຕົວເມືອງ | ເນັ້ນແຕ່ບັນເທີງ | ບໍ່ເປັນລະບົບ,ຂາດ | ຈູງໃຈໃຫ້ເອົາແບບ |

| | | | | |
|---|---|---|---|---|
| | ແລະ ອ້ອມຊານເມືອງ | ຫລາຍກວ່າໃຫ້ສາລະປະໂຫຍດ | ຄວາມຮັບຜິດຊອບ | ຢ່າງໃນທາງລົບ |
| ໂຮງຮຽນ/ຄູ | ເດັກນ້ອຍ ແລະຄົນໜຸ່ມໃນໄວຮຽນ | ຄຳສອນ, ວັນນະຄະດີກາບກອນ | ເປັນລະບົບ ແຕ່ບໍ່ຄົບຖ້ວນ | ບໍ່ເລີກເຊື່ອ ບໍ່ເປັນພື້ນຖານ |

ຂໍ້ສະເຫນີ: ໃນລະຍະສິບຊາວປີມານີ້ ກໍໄດ້ມີຄວາມພະຍາຍາມຫລາຍຢ່າງເກີດຂຶ້ນ ເພື່ອປົກປັກຮັກສາ ສືບທອດວັນນະຄະດີບູຮານຕ່າງໆ ເຊັ່ນ ໂຄງການເກັບກຳນິທານປາກເປົ່າພື້ນເມືອງ ຂອງຊົນຊາດຊົນເຜົ່າ ໂຄງການປົກປັກຮັກສາໜັງສືໃບລານລາວທົ່ວປະເທດ ແລະການພິມຄືນບາງຢ່າງອອກມາຮັບໃຊ້ສັງຄົມ ແຕ່ສະພາບປັດຈຸບັນກໍຄືກຳລັງແຮງ ແລະ ອິດທິພົນຂອງສື່ບັນເທີງຕ່າງປະເທດ ພວມຫລັ່ງໄຫລທົ່ງເທເຂົ້າມາມີບົດບາດຄອບງຳຢູ່ໃນຂົງເຂດຊີວິດວັດທະນະທັມຂອງຊົນຊາວເມືອງ ນັບມື້ນັບໜັກໜ່ວງຂຶ້ນ (ມີຮ້ານຂາຍຜະລິດຕະພັນສິລະປະບັນເທີງ ປະເພດກະແຊດວີດີໂອ ວີຊີດີ ບໍລິການກາເຟ ອິນເຕີແນດ ຢູ່ທົ່ວທຸກແຈເມືອງ ຂ້າງຖະໜົນບ່ອນສອກຫລີກລັບຕາກໍມີ) ພວກເຮົາຈະເຮັດຫຍັງໄດ້ແດ່ ທ່າມກາງລົມພະຍຸແຫ່ງຄວາມສັບສົນທາງດ້ານວັດທະນະທັມແນວນີ້. ວັນນະຄະດີບູຮານຈະມີບົດບາດປະກອບສ່ວນ ຢູ່ໃນການແກ້ໄຂບັນຫາຄວາມທຸກຈົນຂອງປະຊາຊົນລາວແນວໃດ? ໜັງສືໃບລານມີຄຸນນະສົມບັດອັນໃດ ພໍທີ່ຈະຖືກໝູນໃຊ້ໃຫ້ມີສ່ວນພົວພັນກັບຊີວິດການເປັນຢູ່ຂອງຄົນລາວເຮົາບໍ່? ຫລືວ່າເນື້ອເລື່ອງຂອງມັນບໍ່ທັນສະໄໝ ຫລ້າຫລັງເກີນໄປ ໃຊ້ການບໍ່ໄດ້ຈັກຢ່າງແລ້ວ ?

ຜ່ານມາ ກໍໄດ້ມີຄວາມພະຍາຍາມຫລາຍສົມຄວນຂອງຫລາຍໜ່ວຍງານ ທັງພາກລັດ ແລະເອກະຊົນ ໃນການນຳເອົາເລື່ອງເປັນວັນນະຄະດີຄຳສອນຕ່າງໆ ຢູ່ໃນໃບລານ ປຶ້ມພັບສາ ມາຈັດທຳເປັນປຶ້ມນ້ອຍປະກອບຮູບ ບາງກໍແປ ແລະ ປັບປຸງຮຽບຮຽງເນື້ອໄນຄືນ ເພື່ອໃຫ້ຜູ້ອ່ານໜຸ່ມນ້ອຍເຂົ້າໃຈ ແລະ ໄດ້ອ່ານຢ່າງສະດວກ

ສິ່ງພິມປະເພດນີ້ ຈັດພິມໂດຍອົງການ ສະຖາບັນຕ່າງໆ ເຊິ່ງປຶ້ມບາງຫົວບາງເລື່ອງພິມມາໄດ້ 20 ກວ່າປີແລ້ວກໍມີ, ພວກເຮົາພົບວ່າ ມີວັນນະຄະດີບູຮານທີ່ຈັດພິມຕາມເນື້ອໄນເດີມ ແລະ ດັດແປງຂຽນແບບທັນສະໄໝເປັນຮ້ອຍແກ້ວຢູ່ປະມານ 30 ຫົວເລື່ອງເທົ່ານັ້ນ ຄື: 1. ທ້າວສິນໄຊ (ພິມຄືນຫລາຍເທື່ອກວ່າຫມູ່) 2. ຂຸນລູນາງອົ້ວ 3. ນົກຈອກ 4. ທ້າວລິນທອງ 5. ທ້າວນົກກະບາເຜືອກ 6. ນາງແຕງອ່ອນ 7. ນາງຜົມຫອມ 8. ຊຽງໝ້ຽງ (ພິມຫລາຍເທື່ອ) 9. ທ້າວມະໂຫສົດ 10. ກ່ຳພາຂີ້ທູດ 11. ກ່ຳພ້າກັບຄ້ອງວິເສດ 12-13. ກ່ຳພ້າຜີນ້ອຍ-ກ່ຳພ້ານາງງາ (ພິມຫລາຍເທື່ອ) 14. ທ້າວສີທົນ ກັບ ນາງມະໂນລາ

15. ສານໂສມທີ່ຄິດ 16. ສານລຶບພະສູນ 17. ທ້າວກາລະເກດ 18. ກາບເມືອງພວນ 19. ຈຳປາສີ່ຕົ້ນ 20. ທ້າວກ່ຳກາດຳ 21. ນິທານນາງຕັນໄຕ 22. ທ້າວສຽວສະຫວາດ 23. ພື້ນທ້າວຮຸ່ງທ້າວເຈືອງ 24. ກາບປູ່ສອນຫລານ 25. ອິນທິຍານສອນລູກ 26. ຄຳຜະຫຍາຍ່ອຍ (ໂຄງການໃບລານ) 27. ນິທານລັດສີສີງ (ໂຄງການໃບລານ) 28. ຄຳພີທຳມະສາດຊຸດນຶ່ງ 10 ຫົວ ໂດຍ ມະຫາສຳລິດ ບົວສີສະຫວັດ ນອກນີ້ ກໍມີຜູ້ເອົານິທານປາກເປົ່າມາຂຽນເປັນປຶ້ມປະກອບຮູບສຳລັບເດັກອີກ ປະມານ 30 ຫົວເລື່ອງ (ສ່ວນໃຫຍ່ແມ່ນພາກເອກະຊົນ ອົງການພັດທະນາ) ສະເລ່ຽແລ້ວມີການຈັດພິມເລື່ອງບູຮານຈາກໃບລານ ປະມານ 3 ເລື່ອງ/ປີ ອອກມາສູ່ສັງຄົມ ແລະຈາກນິທານປາກເປົ່າທີ່ຂຽນຂຶ້ນໃໝ່ ແລະເລື່ອງອື່ນໆ ກໍເປັນຈຳນວນເທົ່າໆກັນ ນັບວ່າເປັນຕົວເລກທີ່ບໍ່ທັນພຽງພໍເພື່ອໃຫ້ໄດ້ຊື່ວ່າ ຈະເປັນປະເທດກ້າວສູ່ການພັດທະນາແລ້ວ ໃນບໍ່ເທົ່າໃດປີຂ້າງໜ້າ (ນັ້ນມັນໝາຍຄວາມວ່າ ຖ້າພວກເຮົາຍັງກ້າວໄປດ້ວຍຄວາມໄວໃນອັດຕານີ້ ກໍເປັນທີ່ແນ່ໃຈວ່າ ເປົ້າໝາຍຂອງພວກເຮົາອາດຈະເລື່ອນໄປອີກ ເພາະໃນປັດຈຸບັນຫລາຍປະເທດເພື່ອນບ້ານໃນອາຊຽນເອງ ມີສະຖິຕິຜະລິດສິ່ງພິມອອກ ຮອດມື້ລະ 200 ກວ່າຫົວລື່ອງແລ້ວ)

## V. ສະຫລຸບ ແລະ ຂໍ້ສະເໜີ

### ໃຜຈະເຮັດຫຍັງໃນອະນາຄົດ? ຢູ່ໃສ? ເວລາໃດ?

ດັ່ງນັ້ນເພື່ອໃຫ້ມໍລະດົກທາງວັນນະຄະດີ ທີ່ບັນພະບຸລຸດສ້າງສັນໄວ້ໃຫ້ນີ້ ມີອາຍຸຍືນຍາວ ເປັນກຽດສັກສີນຶ່ງຂອງຊາດສືບຕໍ່ໄປ ຈຳເປັນຈະຕ້ອງໄດ້ມີການລະດົມກຳລັງສະຕິປັນຍາ ແລະ ຮ່ວມມືກັນ ຫາແນວທາງປະຕິບັດໃຫ້ເກີດຄວາມຮັບຮູ້ ແລະ ຊົມໃຊ້ຢ່າງກວ້າງຂວາງນັ້ນ, ບັນດາສະຖາບັນການສຶກສາຄົ້ນຄວ້າ ພາສາ ວັດທະນະທັມຕ່າງໆ ຫໍສະໝຸດແຫ່ງຊາດ ມູນນິທິ ສະມາຄົມ ຄວນເປັນເຈົ້າການຊີ້ນຳນຳພາ (ແຕ່ກ່ອນມີກົມວັນນະຄະດີ) ເຊິ່ງອາດຈະຕ້ອງ ເປັນເຈົ້າການດຳເນີນການຕ່າງໆ ຢ່າງຮີບດ່ວນ ດັ່ງນີ້:

1. ຫໍສະໝຸດແຫ່ງຊາດ ເຊິ່ງເປັນເຈົ້າການຂຶ້ນບັນຊີຢູ່ແລ້ວນີ້ ຈັດລຳດັບເລື່ອງທີ່ຖືວ່າເປັນຜົນງານເອກ (ໂດຍມີກຳມະການສະເພາະ ແລະວາງມາດຕະການຄັກແນ່ ເຊັ່ນ ເນື້ອເລື່ອງມ່ວນ ສີລະປະການປະພັນ ສູງ...) ແລ້ວພິມເຜີຍແຜ່ບັນຊີນັ້ນພ້ອມດ້ວຍເລື່ອງຫຍໍ້. ຈະເອີ້ນວ່າ ບັນຊີໜັງສືວັນນະຄະດີຊັ້ນຍອດ ຈາກໃບລານ(1) (ເຮັດໄປເທື່ອລະນ້ອຍທຸກປີ) ພ້ອມທັງຊຸກຍູ້ການຂຽນວິພາກວິຈານ ເພື່ອດຶງດູດຄວາມສົນໃຈຈາກມະຫາຊົນ (ຢູ່ໃນຫລາຍປະເທດເພິ່ນມີການແນະນຳປຶ້ມໜ້າອ່ານປະຈຳປີ ອອກໃນໜັງສືພິມ ວິທະຍຸ... ພ້ອມກັບບົດວິຈານ)

2. ໂຮງຮຽນ ສະຖາບັນ ອົງການ ສະມາຄົມ ບຸກຄົນເອກະຊົນ ເລືອກເອົາເລື່ອງຈາກບັນຊີ(1) ມາຈັດພິມເປັນອັກສອນເກົ່າ ແລະ ໃໝ່ ຄຽງຄູ່ກັນແລ້ວຈັດພິມລື່ອງດີເດັ່ນມາເປັນເຫລັ້ມນ້ອຍໆ ຮຽບຮຽງເລື່ອງໃໝ່ ໃຫ້ເໝາະກັບເດັກ ແລະ ໃສ່ຮູບປະກອບ ສໍາລັບຊັ້ນປະຖົມເຖິງມັດທະຍົມ

3. ນໍາໃຊ້ສື່ຕ່າງໆ ໃນຮູບລະຄອນ ອອກວິທະຍຸ ໂທລະພາບ ລາຍການສົນທະນາ ທວາຍບັນຫາກ່ຽວກັບວັນນະຄະດີບູຮານທີ່ເລືອກເຟັ້ນແລ້ວນັ້ນ, ຕົວຢ່າງການທວາຍພາບປະກອບຄໍາສຸພາສິດ ຄັດເລືອກບົດສຸພາສິດຕ່າງໆ ອອກເປັນຫລາຍປະເພດຕາມຫົວຂໍ້ສໍາຄັນ ເຊັ່ນ(1) ສົ່ງເສີມຄວາມສາມະຄີ, (2) ສົ່ງເສີມຄວາມກະຕັນຍູຮູ້ຄຸນຄູບາອາຈານ ພໍ່ແມ່, (3) ສົ່ງເສີມຄວາມຊື່ສັດຜົວເມຍ, (4) ຕັກເຕືອນໃຫ້ຮູ້ຖະໜອມຖ່ອມຕົນ ແລະ ອື່ນໆ ແລ້ວແຕ້ມຮູບປະກອບຕາມເນື້ອໃນ ເຮັດໃບໄພ້ໃສ່ຮູບ ແລະ ຄໍາສຸພາສິດຄົນລະດ້ານໃຫ້ໄດ້ 30-50 ໃບ, ວາງກົດເກນຫລິ້ນໃສ່ປຶ້ມນ້ອຍໃຫ້ເບິ່ງຮູບແລ້ວອ່ານຄໍາສຸພາສິດທີ່ກົງກັບຮູບ ເລືອກໃບໄພ້ນັ້ນອອກມາ ຄະແນນສະສົມໄວ້ເປັນຮອບໆ

4. ນໍາເຂົ້າໃນລະບົບການສຶກສາທຸກຊັ້ນ ໃນຮູບແບບບໍລິສຸດ: ທຸກສາຂາທີ່ກ່ຽວຂ້ອງຕ້ອງປັບປຸງຫລັກສູດການຮຽນ ໂດຍຕື່ມຊົ່ວໂມງຮຽນວັນນະຄະດີບູຮານຫລາຍຂຶ້ນ, ຊັ້ນປະຖົມ ຮຽນເລົ່າທ່ອງຂຶ້ນໃຈກາບກອນມ່ວນໆ ສັ້ນໆ ໂດຍແບ່ງຕັດອອກມາ ແລ້ວຄ່ອຍໆຍາກຂຶ້ນ, ສ້າງປຶ້ມອ່ານເສີມໃຫ້ຫລາກຫລາຍ, ສ້າງກິດຈະກໍາສໍາລັບນັກຮຽນ ກ່ຽວກັບວັນນະຄະດີບູຮານ

5. ດ້ານການສະແດງ ໂຮງຮຽນສິລະປະດົນຕີ: ນໍາເອົາເລື່ອງວັນນະຄະດີເດັ່ນໆ ມາສະແດງເປັນລະຄອນປະກອບບົດຟ້ອນ ເຊັ່ນ ເລື່ອງສິນໄຊ ທ້າວຮຸ່ງທ້າວເຈືອງ (ນອກຈາກເລື່ອງພະລັກພະລາມແດ່)

6. ວິທະຍາໄລວິຈິດຕະກໍາ ຈັດງານປະກວດອອກແບບຕົວລະຄອນຕາມເລື່ອງວັນນະຄະດີ ເຊັ່ນ ທ້າວສິນໄຊ, ທ້າວສັງທອງ, ທ້າວສີໂທ, ທ້າວເວດສັນດອນ, ນາງມະທີ, ນາງສຸມຸນມາ, ນາງສີດາຈັນ, ທ້າວພະຍານາກ ວະຣຸນນະລາດ, ຍັກກຸມພັນ, ທ້າວຂຸນລູ-ນາງອົ້ວ, ນາງຜົມຫອມ ເປັນຕົ້ນ ...) ສິ່ງເຫລົ່ານີ້ ຈະສົ່ງເສີມໃຫ້ມີການຄົ້ນຄວ້າຮອບດ້ານຢ່າງຈິງຈັງ ເປັນການຮັກສາ ປັບປຸງ ດັດແປງ ເຜີຍແຜ່ອອກສູ່ມະຫາຊົນ)

7. ມະຫາວິທະຍາໄລ/ສະຖາບັນຄົ້ນຄວ້າດ້ານພາສາ-ວັນນະຄະດີ ສຶກສາວິໄຈ ປຽບທຽບ ເລື່ອງວັນນະຄະດີບູຮານ ໃນໃບລານລາວ ກັບຂອງປະເທດໃກ້ຄຽງ ໃນລະດັບປະລິນຍາຕີ ໂທ ເອກ (ເພາະແມ່ນແຕ່ຢູ່ໃນປະເທດອື່ນ ເພິ່ນກໍນໍາເລື່ອງພື້ນເມືອງຂອງລາວໄປສຶກສາຄົ້ນຄວ້າໄດ້ ເປັນການຊອກຮູ້ຊອກເຂົ້າໃຈ ປະເທດເພື່ອນບ້ານ )

ຖ້າມີການເຄື່ອນໄຫວຫລາຍຮູບຫລາຍແບບແນວນີ້ ກໍເປັນທີ່ຈະແຈ້ງວ່າ ພວກເຮົາຈະໄດ້ຮັບຜົນປະໂຫຍດຢ່າງຫລວງຫລາຍ ຈາກຄັງສາງສີໃບລານບູຮານຂອງເຮົາ ທັງຈະສ້າງຄວາມພາກພູມໃຈໃນຄວາມເປັນຊາດຢ່າງໜັກແໜ້ນເລິກເຊິ່ງ. ນອກນີ້ ພວກເຮົາຍັງຈະໄດ້ຄວາມຮູ້ດ້ານວິຊາການຕ່າງໆ ທີ່ສຳຄັນ ເຊັ່ນ ດ້ານປະຫວັດສາດ ສາສະໜາ ປັດຊະຍາ ການປົກຄອງ ຫລືຣັດຖະສາດ (ຄຳພີທັມມະສາດບູຮານ ສ້ອຍສາຍຄຳຂຽນໄວ້ຢ່າງລະອຽດ ຄົນກະທຳຜິດສະຖານໃດ ຄວນລົງໂທດສະຖານໃດ ພ້ອມດ້ວຍເຫດຜົນປະກອບ) ໂດຍທີ່ສຸດແລ້ວ ດ້ານພາສາວັນນະຄະດີ ສຳນວນຄຳເວົ້າ ທີ່ເຮົາຈະໄປຫາຮຽນຢູ່ໃສໃນໂລກບໍ່ໄດ້ (ບໍ່ຄືຄວາມຮູ້ດ້ານວິທະຍາສາດອື່ນໆ ເຊິ່ງມີຢູ່ທົ່ວໄປ )

## ຕົວຢ່າງສຳນວນຄຳເວົ້າຄັດຈາກໃບລານ: ສຳນວນຊົມດອກໄມ້ໃນພື້ນທ້າວຮຸ່ງ

| | |
|---|---|
| ດອກບົ່ງກ້ຽງກ່ອມກ້ຽງ | ລົມໄກວ |
| ດວງບົ່ງຄຳຄຳໄຣ | ຈາກໄຮ່ |
| ດອກບົ່ງຍໍແຍຖໄນ | ປອງມິ່ງ |
| ຈັກຖືກຄຳຈອມໄທ້ | ຂ້ານ້ອຍທູນຖວາຍ |
| ດອກບົ່ງຮວ່ານໆຟ້າ | ດັງໜັກ |

ຕອນຊັ່ງແນນ ຄຳສັ່ງລາ ສະແດງຄວາມສະເໜຫາອາໄລທີ່ມ່ວນອອນຊອນທັງຄຳເວົ້າ ແລະເນື້ອຫາ
(ຫນ້າ 41 ບາດທີ 420 ໃບລານ ທີ 81 )
ຫນ້າ 36/ ສະບັບພິມ 1987, ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

| | |
|---|---|
| ເຮົາກໍ ມາມ່ວນຫລົ້ນທອນພາກ | ບໍຣະບວນ |
| ຜນົວເໝືອຍພອກມາຍ | ມຸງຂ້ອນ |
| ດູດ່ວນດັ້ງຣາຕີ | ໃກ້ຮຸ່ງ |
| ແສງແດດຮ້ອນຊາວຟ້າ | ໄຄ່ລາ |
| ຈັກດຸ່ງດັ້ນດັ້ນດຸ່ງ | ປອມລົມ |
| ສະເໜຫາຮັກພີ່ລາ | ລາແລ້ວ |
| ມາສົມສ້ອຍຊົມສອງ | ສົມສູ່ |

| | |
|---|---|
| ມາຈອບເຈົ້າແພງຊ້າງ | ຊ່າງຈາ |
| ມາຢູ່ຫລິ້ນຫລິ້ນມ່ວນ | ຊົມສນຸກ |
| ກາຍເພລາພີ່ຈັກລາ | ລານ້ອງ |
| ລຸກລຸກແລ້ວນອນນອນ | ທົບໂສກ |
| ຮ້ອງຮ່ຳຖ້ອຍແຖມຖ້ອຍ | ທີ່ແຂ |
| ມີໂຊກແລ້ວແລ້ວເລົ່າ | ມີເຄາະ |
| ໂຣຄາແກມເກີດແກມ | ເກົາກົ້ວ |
| ເໜາະເໜາະໜີ້ໃດນໍ | ມາມໍ່ ສັບນີ້ |
| ຈັກຈາກເຈົ້າຄຶງຄົ້ວດ່ວນເມືອ | ກ່ອນແລ້ວ |
| ຄຶດຮໍ່ຮ້ອນຮົມຮໍ່ | ຮຽງຮັກ ແດ່ເນີ |
| ຍາລືມເລີຍເປີດເຫລືອ | ລືມໜ້າ |
| ສຽມສາວສ້ອຍສາໂຣຈ໌ | ຮີຮ່ຳ |
| ແຕ່ນັ້ນທ້າວຮຸ່ງຜູ້ນົງໜ້າ | ກ່າວກອນ |

**ໜ້າ 42 ຕອນຈະຈາກກັນ**

| | |
|---|---|
| ຊວາດໆຊ້າງຢ້ອງຍ່າງ | ແກມລວາ |
| ຊາວບົນກວນສັ່ງສາວ | ສຽງຮ້ອງ |
| ເຫຫວງຮ້ອນຮົມກະຫາຍ | ຫິວສວາດ |
| ເຈົ້າຈາກນ້ອງອວນນ້ອງ | ຈາກຮຽມ |
| ຄຶດຮອດເຈົ້າຈົ່ງຈອດ | ຄຳສເນ |
| ເມືອງໆ ພາຍບົນທຽວຍັ່ງເມືອ | ເມືອງຟ້າ |
| ລິວໆຂ້າມຄູຫາ | ຫລາຍຫລັ່ນ |
| ມົວມືດຟ້າຂຽວສີ້ວ | ຊໍ່ເຫລືອງ |
| ຖັກຖັ່ນໄມ້ຊ້ອງຊໍ່ | ຂຽວນິນ ພຸ້ນເຍີ |
| ກາຍທີ່ນາເນືອງເຖິງທ່າພຽງ | ເມືອໜ້າ |
| ເມື່ອນັ້ນພູມິນເຈົ້າເຈືອງລຸນ | ລ້ານມາດ |

| | |
|---|---|
| ຄຶດພີ່ຜູ້ນົງໜ້າ | ໝື່ນກະສັນ |
| ລືຈັກນິຣາດຣ້າງຮາມຮູບ | ຮຽງຕົນ ໄດ້ເດ |
| ລຳລຳຜັນລູບນາງ | ນົງໜ້າ |
| ບາໄທທ້າວທົງກະສັນ | ຄຶດຄັ່ງ |
| ໜ້າຕໍ່ໜ້າສງວນຊູ້ | ຊ່າງຊົມ |
| ຍັ່ງຍັ່ງນ້ຳຍ້ອຍເນດ | ນອງໄຫລ |
| ຍິນອາຣົມຄັ່ງປານ | ເປັນບ້າ |
| ດູດັ່ງຮາມຮຽມແກ້ວກູໄກ | ກິນໂສກ |
| ພຣະພີ່ເພື່ອໜ້າຄະນິງໄວ້ | ແວ່ນທວງ ແດ່ເນີ |
| ເມື່ອໃດລຸໂຊກໄດ້ໂດຍດັ່ງ | ປາຖນາ |
| ບຸນຍວງຍົດຍິ່ງທາງ | ໄທອ້າງ |
| ຈຽມແຕ່ສອງສົມສ້ອຍ | ສາຮາໃຊ້ຊູ່ |
| ທຸກທີ່ເຮື້ອງນະຄອນກວ້າງ | ແຜ່ຜາຍ |

**ຕົວຢ່າງຄຳອຸທິດ ຢູ່ປົກໃບລານເລື່ອງສຽວສະຫວາດ (ສານໜ້າປົກໃບລານ)**

" ສາທຸ ສອງຜູ້ອ້າຊື່ວ່າຕາແສງ ຜົວເມັຽລູກເຕົ້າ ຢ້າວເຮືອນ ໄດ້ພ້ອມມີໃຈໃສສັດທາ ສ້າງໜັງສືສຽວສວາດ ໄປຫາແກ້ວທັງສາມ ຂໍໃຫ້ມາໂຈມຮັບຈັບ.. ຊູຜູ້ອ້າ ເອັຽໃດໃຫ້ເປັນ ເຫັນອັນໃດໃຫ້ໄດ້ ແລ້ວຂໍໃຫ້ລ້ຽງລູກໃຫ້ສູງ ຈູງລູກໃຫ້ໃຫຽ່ ຫາຍຈາກພຍາຽທິໂລຄາ ແລ້ວຂໍໃຫ້ມີອາ... ປີຍາໄດ້ຂາຽ ແດ່ກໍອ້າເທີນ ອີກປະການນຶ່ງ ຂໍໃຫ້ອານິສົງ ແດ່ກໍອ້າເທີນ ສາທຸ ສາທຸ ອານຸໂມທາມິ ປາລະມັງສຸກອັງ "

ຈະເຫັນໄດ້ວ່າ ຄວາມເຊື່ອສັດທາຂອງຄົນລາວແຕ່ເກົ່າ ບໍ່ໄດ້ງົມງວາຍໄຮ້ສາລະ ການຂໍພອນລ້ຽງລູກໃຫ້ສູງ ຈູງລູກໃຫ້ໃຫຽ່ ນັບວ່າເປັນຄຳຂໍທີ່ທັນສະໄໝ ມີມະນຸດສະທັມ ສົມເຫດສົມຜົນ

ດັ່ງນັ້ນ ໃນການສືບທອດສິ່ງດີງາມອັນເປັນມໍລະດົກນຶ່ງນີ້ ເຮົາອາດຈະຕ້ອງຮີບຟ້າວລົງມືທົບທວນກວດກາເບິ່ງວ່າ ສິ່ງໃດເໝາະສົມ ວິທີການໃດມີປະສິດທິຜົນ ສິ່ງໃດເປັນທີ່ຍອມຮັບຂອງຄົນຮຸ່ນໃໝ່ ແລະສາມາດກາຍເປັນມໍລະດົກຮວມຂອງມະນຸດຊາດໄດ້

ຂໍຂອບໃຈ ໂຄງການສົ່ງເສີມໃບລານ ໂດຍສະເພາະ ລັດຖະບານເຢຍຣະມັນ ແລະ ທ່ານສາສະດາຈານ ດຣ. ຮາຣັນ ຮຸນດິອຸສ ທີ່ເຮັດໃຫ້ພວກເຮົາໄດ້ມາຄົ້ນຄືດ ທົບທວນແລກປ່ຽນຄວາມຄິດເຫັນນຳກັນ ຢ່າງກວ້າງຂວາງ ແລະເລິກເຊິ່ງຢ່າງນີ້, ແລະມູນນິທິຍີ່ປຸ່ນ ສູນກາງອາຊີ ມູນນິທິ ໂຕໂຍຕາ ປະເທດຍີ່ປຸ່ນ ທີ່ໄດ້ແນມເຫັນຄຸນຄ່າຂອງມໍລະດົກວັນນະຄະດີລາວ ແລະທ້າຍສຸດ ຂ້າພະເຈົ້າຂໍຈາລຶກບຸນຄຸນບັນດານັດປາດອາຈານ ບັນພະບຸລຸດລາວທຸກຍຸກສະໄໝ ທີ່ໄດ້ສ້າງສົມມໍລະດົກດ້ານວັນນະຄະດີທັງໝົດ ໄວ້ໃຫ້ແກ່ພວກເຮົາທີ່ເປັນລູກຫລານໄດ້ເອກອ້າງພາກພູມໃຈທຽມເທົ່າຊາດອື່ນໆ

**ເອກະສານຄົ້ນຄວ້າ:**

1. ສຳເນົາໜັງສືຜູກໃບລານ ພື້ນທ້າວຮຸ່ງ ທ້າວເຈືອງ, ປຶ້ມທ້າວຮຸ່ງ ທ້າວເຈືອງ ສະບັບພິມ 1987, ກະຊວງຖະແຫລງຂ່າວ ແລະ ວັດທະນະທັມ
2. ໂຮມຜະຫຍາຍ່ອຍ, ມະຫາບຸນຍົກ ແສນສຸນທອນ ໂຄງການປົກປັກໜັງສືໃບລານລາວ, 1996
3. ວັນນະຄະດີເພື່ອການສຶກສາ, ມະຫາສີລາ ວີຣະວົງສ໌ ກົມວັນນະຄະດີ 1960
4 ປື້ມແບບຮຽນ ພາສາ-ວັນນະຄະດີລາວ ມ. 3-4-5-6, 1998-99 ກະຊວງສຶກສາ
5. ອິນທິຍານສອນລູກ, ສະຖາບັນຄົ້ນຄວ້າສິລະປະວັນນະຄະດີ, ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ 1987
6. ພົງສາວະດານລາວ, ມະຫາສີລາ ວີຣະວົງສ໌, ກະຊວງສຶກສາທິການ 1972
7. ໂລກນິຕິ ຄຳໂຄງ, ມະຫາສີລາ ວີຣະວົງສ໌, ກົມວັນນະຄະດີ 1960
8. ໜັງສືຜູກໃບລານ ເລື່ອງສຽວສວາດ